ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--- == 000 == ---

ສຳນັກງານນາຍົກລັດຖະມົນຕີ ເລກທີ : 349 /ນຍ

ນະຄອນຫຼວງວຽງຈັນ, ວັນທີ : 02. 10. 2007.

# ດຳລັດ

## ຂອງນາຍົກລັດຖະມົນຕີ

ວ່າດ້ວຍການປັບປຸງໂຄງປະກອບການຈັດຕັ້ງ ຂອງ
ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 37/ນຍ, ລົງວັນທີ 1 ເມສາ 2003 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມາທິການ ເພື່ອຄວາມກ້າວໜ້າ ຂອງແມ່ຍິງແຫ່ງຊາດ.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ: 12/ນຍ, ລົງວັນທີ: 24 ມິຖຸນາ 2006. ວ່າດ້ວຍການປັບປຸງບາງມາດຕາ ຂອງດຳລັດເລັກທີ 37/ນຍ.
- ອີງຕາມການຕົກລົງເຫັນດີ ຂອງປະຊຸມຄົບຄະນະ ປະຈຳປີ 2005-2006 ຂອງ ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ຄັ້ງວັນທີ 18 ສິງຫາ 2006;
- ອີງຕາມສະພາບການຕົວຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງໃນໄລຍະໃໝ່.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ປັບປຸງການຈັດຕັ້ງຂອງ ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄ.ກ.ມ.ຊ) ໃຫ້ສອດຄ່ອງກັບສະພາບການຕົວຈິງ ເພື່ອໃຫ້ຄະນະກຳມາທິການ ດັ່ງກ່າວມີກຳລັງແຮງພຽງພໍ ເພື່ອປະຕິບັດ ພາລະບົດບາດ ແລະ ໜ້າທີ່ຂອງຕົນ ດັ່ງທີ່ໄດ້ກຳນົດໄວ້ໃນດຳລັດສະບັບທີ 37/ນຍ, ລົງວັນທີ 1 ເມສາ 2003 ໃຫ້ໄດ້ຮັບຜົນສຳເລັດດີຂຶ້ນຕື່ມອີກ.

ມາດຕາ 2: ຄະນະກຳມາທິການ ແຫ່ງຊາດ ຄະນະໃໝ່ ປະກອບດ້ວຍ ບັນດາທ່ານທີ່ມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ
   ເປັນປະທານ
2. ທ່ານ ນາງ ສີໃສ ລືເດດມູນສອນ, ປະທານສູນກາງສະຫະພັນແມ່ຍິງລາວ,
   ເປັນຮອງປະທານ,ທັງເປັນຜູ້ປະຈຳການ

3. ທ່ານ ນາງ ບຸນເພັງ ມູນໂພໄຊ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເປັນຮອງປະທານ

4. ທ່ານ ປອນເມກ ດາລາລອຍ, ລັດຖະມົນຕີວ່າການ ກະຊວງ ສາທາລະນະສຸກ ເປັນຮອງປະທານ

5. ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີຊ່ວຍວ່າການ ກະຊວງ ສຶກສາທິການ ເປັນຮອງປະທານ

6. ທ່ານ ເກດ ກຽດຕິສັກ, ລັດຖະມົນຕີຊ່ວຍວ່າການ ກະຊວງ ຍຸຕິທຳ ເປັນກຳມະການ

7. ທ່ານ ລາວລີ ໄຟເພັງຍິວ, ລັດຖະມົນຕີຊ່ວຍວ່າການ ກະຊວງ ແຮງງານ ແລະ ສະຫວັດດີການ-ສັງຄົມ ເປັນກຳມະການ

8. ທ່ານ ຫຽມ ພົມມະຈັນ, ລັດຖະມົນຕີຊ່ວຍວ່າການ ກະຊວງ ການຕ່າງປະເທດ ເປັນກຳມະການ

9. ທ່ານ ພົນຈັດຕະວາ ຕຸລາ ອິນທາທິລາດ, ລັດຖະມົນຕີຊ່ວຍວ່າການ ກະຊວງ ປ້ອງກັນຄວາມສະຫງົບ ເປັນກຳມະການ

10. ທ່ານ ບົວເງິນ ຊາພູວົງ, ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນກຳມະການ

11. ທ່ານ ສຽວສະຫວາດ ສະແຫວງສຶກສາ, ລັດຖະມົນຕີຊ່ວຍວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນກຳມະການ

12. ທ່ານ ຕີ ພົມມະສັກ, ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ-ປ່າໄມ້ ເປັນກຳມະການ

13. ທ່ານ ທອງມີ ພົມມີໄຊ, ຮອງປະທານ ຄະນະກຳມະການ ແຜນການ ແລະ ການລົງທຶນ ເປັນກຳມະການ

14. ທ່ານ ສົທົງ ທອງແກ້ວ, ລັດຖະມົນຕີຊ່ວຍວ່າການ ກະຊວງ ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ເປັນກຳມະການ

15. ທ່ານ ສົມພາວ ໄຟສິດ, ຮອງຜູ້ວ່າການທະນາຄານ ແຫ່ງ ສ ປ ປ ລາວ ເປັນກຳມະການ

16. ທ່ານ ຄຳພັນ ຄຸນບໍລິນ, ລັດຖະມົນຕີຊ່ວຍວ່າການກະຊວງ ການເງິນ ເປັນກຳມະການ

17. ທ່ານ ສຈ.ດຣ. ໄຊຍະມັງ ວົງສັກ, ຮອງປະທານສູນກາງແນວລາວສ້າງຊາດ ເປັນກຳມະການ

18. ທ່ານ ນາງ ບັນດິດ ປະທຸມວັນ, ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ

19. ທ່ານ ວັນນາ ດວງພະຈັນ, ຮອງເລຂາຊາວໜຸ່ມ ປ ປ ລາວ ເປັນກຳມະການ

20. ທ່ານ ຄຳພາ ແສງດາລາ, ຮອງປະທານສານປະຊາຊົນສູງສຸດ ເປັນກຳມະການ

21. ທ່ານ ລັງສີ ສີບຸນເຮືອງ, ຮອງໄອຍະການປະຊາຊົນສູງສຸດ ເປັນກຳມະການ

ມາດຕາ 3: ໃຫ້ຮັກສາ ກອງເລຂາ ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ໃນຖານະເປັນເສນາທິການ ໃຫ້ແກ່ ຄະນະກຳມາທິການແຫ່ງຊາດ ຄະນະໃໝ່ໂດຍມີຫ້ອງການ ຕັ້ງຢູ່ ສຳນັກງານນາຍົກລັດຖະມົນຕີ.

ມາດຕາ 4: ຄະນະເລຂາທິການລັດຖະບານ, ສຳນັກງານນາຍົກລັດຖະມົນຕີ, ບັນດາທ່ານລັດຖະມົນຕີ ວ່າການ, ປະທານ ອົງການທຽບເທົ່າກະຊວງ, ບັນດາທ່ານຫົວໜ້າອົງການຈັດຕັ້ງຕ່າງໆ ຂອງ ພັກ-ລັດ ແລະ ບັນດາທ່ານ ທີ່ຖືກແຕ່ງຕັ້ງໃນມາດຕາ 2 ຂອງດຳລັດສະບັບນີ້ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 5: ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄະນະກຳມາທິການ ຊຸດເກົ່າ ທີ່ຖືກແຕ່ງຕັ້ງຕາມດຳລັດ ສະບັບເລກທີ 37/ນຍ, ລົງວັນທີ 1 ເມສາ 2003.

ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ

ບົວສອນ ບຸບຜາວັນ